- ຂີ້ກະເດືອນເຮົາສາມາດລ້ຽງໄດ້, ເປັນແນວພັນຂະໜາດນ້ອຍ, ສາມາດຂະຫຍາຍພັນໄດ້ໄວ ແລະ ຈຳນວນຫຼາຍ.
- ການໃຫ້ອາຫານປາດຸກຍັງນ້ອຍ ແມ່ນໃຫ້ອາຫານສຳເລັດຮູບປາດຸກນ້ອຍ, ກ່ອນໃຫ້ອາຫານແມ່ນຄວນນຳໄປແຊ່ນ້ຳກ່ອນໃຫ້ປາກິນ, ວິທີການແມ່ນຈະໃຫ້ໃນປະລິມານ 10-12 ເປີເຊັນ ຂອງນ້ຳໜັກປາຕໍ່ວັນ ແລະ ໃຫ້ 2 ຄັ້ງ (ເຊົ້າ ແລະ ແລງ).
- ຖ້າປາຂະໜາດໃຫຍ່ຂຶ້ນໃນເດືອນທີ່ 3 ແມ່ນໃຫ້ອາຫານໃນອັດຕາ 3-5 ເປີເຊັນ ຂອງນ້ຳໜັກປາທັງໝົດຕໍ່ວັນ ແລະ ໃຫ້ 2 ຄັ້ງ.

**ຕາຕະລາງ ທີ່ 2: ເປີເຊັນ ແລະ ໄລຍະເວລາການໃຫ້ອາຫານ ລູກປາ (2,500 ໂຕ)**

| ໄລຍະເວລາ (ອາທິດ) | ເປີເຊັນຂອງອາຫານ /ນ້ຳໜັກປາ/ວັນ | ປະລິມານອາຫານ ຕໍ່ໜຶ່ງວັນ |
|---|---|---|
| 1-2 | 12 % | 400-800 ກຼາມ |
| 3-4 | 10 % | 1,200-1,600 ກຼາມ |
| 5-8 | 8 % | 4- 6 ກິໂລກຼາມ |
| 9-12 | 5 % | 6-8 ກິໂລກຼາມ |
| 13-16 | 3 % | 8-10 ກິໂລກຼາມ |




**ອາຫານສຳເລັດຮູບ ແລະ ຂີ້ກະເດືອນເພື່ອລ້ຽງປາດຸກ**

## 6. ການບົວລະບັດຮັກສາ ແລະ ເກັບກູ້ຜົນຜະລິດ

- ບໍ່ຄວນໃຫ້ອາຫານຫຼາຍເກີນໄປ ເພາະຈະເຮັດໃຫ້ນ້ຳເນົ່າເສຍ.
- ການລ້ຽງປາໃນໜອງຜ້າຢາງຄວນນຳຜັກຕົບມາໃສ່ ເພື່ອເປັນບ່ອນລີບລີ້ຂອງປານ້ອຍທີ່ນຳມາລ້ຽງໃໝ່.
- ຜັກຕົບຍັງຊ່ວຍຮັກສາອຸນຫະພູມນ້ຳໃນໜອງບໍ່ໃຫ້ຮ້ອນຫຼາຍ ແລະ ຍັງຊ່ວຍຮັກສານ້ຳບໍ່ໃຫ້ເນົ່າເສຍໄວ
- ຖ້ານ້ຳເນົ່າເສຍຄວນປ່ຽນຖ່າຍນ້ຳໃໝ່ທັນທີ ເພື່ອເຮັດໃຫ້ປາກິນອາຫານໄດ້ດີ ແລະ ໃຫຍ່ໄວ.
- ຖ້າເຮົາລ້ຽງປາ 4 ຫາ 5 ເດືອນ, ຈະໄດ້ປາທີ່ມີຂະໜາດ 6-7 ໂຕຕໍ່1 ກກ ແລະ ສາມາດຈັບຂາຍ ຫຼື ນຳມາບໍລິໂພກໄດ້.



ຜົນຜະລິດປາດຸກຈາກການລ້ຽງປະມານ 4-5 ເດືອນ

ອອກແບບ ແລະ ຈັດໜ້າໂດຍ:
ທີມງານ
ສະຖາບັນຄົ້ນຄ້ວາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ສູນຄົ້ນຄວ້າການປະມົງ
ບ້ານຈັນສະຫວ່າງ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ
ສ ປປ ລາວ.
ໂທ: +856 20 98976875
E-mail : oulaytham02@hotmail.com

**ກະຊວງກະສິກຳ ແລະ ສິ່ງແວດລ້ອມ**

# ຂັ້ນຕອນເຕັກນິກ
# ການລ້ຽງປາດຸກໃນໜອງຜ້າຢາງຢູ່ພື້ນທີປູກຜັກສວນຄົວ



**ໂຄງການກະສິກຳ ເພື່ອໂພຊະນາການ ໄລຍະ 2**
**ພຶດສະພາ, 2025**

## 1. ການເລືອກສະຖານທີ່

- ການເລືອກສະຖານທີ່ຈະລ້ຽງປາດຸກໃນໜອງຜ້າຢາງຄວນເລືອກບ່ອນທີ່ຕ່ຳ ແລະ ເປັນເຂດສວນຄົວເຮືອນ.
- ພື້ນທີ່ຕ້ອງໃກ້ແຫຼ່ງນ້ຳ ເຊັ່ນ: ນ້ຳສ້າງ ຫຼື ນ້ຳບາດານ
- ພື້ນທີ່ລ້ຽງປາຄວນມີຮົ່ມຕົ້ນໄມ້ເພື່ອປ້ອງກັນບໍ່ໃຫ້ໜອງປາຕາກແດດຫຼາຍ, ຖ້ານ້ຳຮ້ອນຫຼາຍເກີນໄປ ຈະເຮັດໃຫ້ນ້ຳໃນໜອງແຫ້ງໄວ ແລະ ມີຜົນກະທົບຕໍ່ການລ້ຽງປາ.

## 2. ການກະກຽມໜອງຜ້າຢາງ

- ເມື່ອເລືອກສະຖານທີ່ໄດ້ແລ້ວໃຫ້ຂຸດໜອງຂະໜາດ 3x4 ແມັດ, ເລິກປະມານ 80 ຊມ ຕາມຮູບພາບ.
- ຕັດຜ້າຢາງດຳໃຫ້ໄດ້ຂະໜາດ 4x8 ແມັດ ປູລົງໃສ່ໜອງທີ່ຂຸດໄວ້.
- ໃສ່ທໍ່ລະບາຍນ້ຳເພື່ອສະດວກໃນການປ່ຽນຖ່າຍນ້ຳ, ຫຼັງຈາກນັ້ນເອົານ້ຳເຂົ້າໃສ່ໜອງ.



**ລັກສະນະຂອງໜອງຂຸດໄວ້ຂະໜາດ 3x4 ແມັດ**



**ລັກສະນະການປູໜອງຜ້າຢາງຂະໜາດ 3x4 ແມັດ**



**ລັກສະນະຂອງໜອງຜ້າຢາງຂະໜາດ 3x4 ແມັດ**

## 3.ລັກສະນະຂອງລູກປາທີ່ດີ

- ລູກປາຈະລອຍໄປມາ ຫຼື ເຄື່ອນໄຫວຄ່ອງແຄ້ວ ໂດຍບໍ່ລອຍຕົ້ງສາກັບນ້ຳ.
- ລຳໂຕສົມບູນ, ໜວດ, ຫາງ, ຄີບໍ່ກຸດຫ້ຽນ, ບໍ່ມີບາດແຜຕາມໂຕ.
- ຂະໜາດຂອງລູກປາຕ້ອງສະໝ່ຳສະເໝີ, ເພາະປາດຸກເປັນປາກິນຊີ້ນ, ຖ້າອາຫານບໍ່ພຽງພໍລູກປາຈະກິນກັນເອງ.



**ລັກສະນະແນວພັນປາຕ້ອງແຂງແຮງ ແລະ ມີຂະໜາດສະໝ່ຳສະເໝີກັນ**

## 4. ອັດຕາການປ່ອຍລ້ຽງ

- ລູກປາທີ່ຈະເລີ່ມນຳມາລ້ຽງຕ້ອງມີຂະໜາດ 5-7 ຊມ ຄວນປ່ອຍໃນອັດຕາ 50 ໂຕ/ມ$^2$.
- ນຳຖົງລູກປາແຊ່ໄວ້ໃນນ້ຳປະມານ 10-15 ນາທີກ່ອນຈຶ່ງປ່ອຍລົງລ້ຽງໄດ້.
- ການປ່ອຍລູກປາຄວນປ່ອຍຕອນເຊົ້າ ຫຼື ຕອນແລງ ເພື່ອປ້ອງກັນບໍ່ໃຫ້ປາຊ໊ອກຕາຍ.

**ຕາຕະລາງ ທີ່ 1: ອັດຕາການປ່ອຍແນວພັນປາດຸກລ້ຽງ**

| ຮູບແບບການລ້ຽງ | ຂະໜາດ (ແມັດ) | ຈຳນວນການປ່ອຍ (ໂຕ) |
|---|---|---|
| ການລ້ຽງໃນຄອກໜອງດິນ ຫຼື ອ່າງຊີມັງ | 3x4 | 2,500 |



**ການປ່ອຍລູກປາລົງລ້ຽງໃນໜອງຜ້າຢາງໃນຕອນເຊົ້າ**

## 5. ປະເພດອາຫານ ແລະ ວິທີການໃຫ້ອາຫານ

- ອາຫານລ້ຽງປາທີ່ນິຍົມແມ່ນອາຫານສຳເລັດຮູບທີ່ມີທາດໂປຼຕີນ 35 ເປີເຊັນຂຶ້ນໄປ, ແລະ ມີ 3 ຂະໜາດຕາມຂະໜາດປາ (ປາດຸກນ້ອຍ, ກາງ ແລະ ໃຫຍ່).
- ອາຫານຈາກທຳມະຊາດ ເຊັ່ນ: ແມງໄມ້ຊະນິດຕ່າງໆ,ປວກ, ຫອຍ, ກະປູ ແລະ ຂີ້ກະເດືອນ.